**ບົດຮຽນໂຮງຮຽນວັນອາທິດ**
**ວັນອາທິດທີ 30 ຕຸລາ 2022 (10-30-2022)**

---

**ສຶກສາພຣະຄຳຂອງພຣະເຈົ້າ**

*ເມື່ອໃດທີ່ທ່ານມັກຮຽນສິ່ງໃດສິ່ງນຶ່ງແທ້ໆ?*

**ຈຸດສຳຄັນໃນບົດຮຽນ:** ການສຶກສາພຣະຄຳຂອງພຣະເຈົ້າເປັນປະຈຳເຮັດໃຫ້ພວກເຮົາມີພື້ນຖານທີ່ໝັ້ນຄົງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຂ້າພະເຈົ້າເປັນແຟນຂອງກຸ່ມໃຫຍ່ຂອງເບສບອລ (Major League Baseball). ເຖິງແມ່ນວ່າໃນຕອນເປັນ ເດັກນ້ອຍ, ຂ້າພະເຈົ້າໄດ້ນັ່ງຢູ່ໜ້າໂທລະທັດ(TV)ເບິ່ງເກມນັບບໍ່ຖ້ວນຄັ້ງ. ມື້ນີ້, ທ່ານສາມາດຖາມຂ້າພະເຈົ້າກ່ຽວກັບກົດລະບຽບໃດໆ, ແລະຂ້າພະເຈົ້າສາມາດອະທິບາຍໃຫ້ທ່ານໄດ້. ໃຫ້ຂ້າພະເຈົ້າເບິ່ງຮູບຂອງສນາມເບສບອລ, ແລ້ວຂ້າພະເຈົ້າຈະບອກໄດ້ວ່າມັນຢູ່ໃນເມືອງໃດ.

ຂ້າພະເຈົ້າສາມາດໄປອີກບາດກ້າວນຶ່ງ. ຕອນເປັນຜູ້ໃຫຍ່, ຂ້າພະເຈົ້າໄດ້ເຂົ້າຮ່ວມການຫຼິ້ນເກມດ້ວຍຕົວເອງຢູ່ທຸກສນາມຂອງກຸ່ມໃຫຍ່ຂອງເບສບອລ. ດັ່ງນັ້ນ, ຂໍ້ມູນທົ່ວໄປທີ່ຂ້າພະເຈົ້າໄດ້ຮຽນຮູ້ໃນຕອນຍັງນ້ອຍໄດ້ກາຍເປັນການປັບປຸງເສີມຂຍາຍຢ່າງເລິກເຊິ່ງຍິ່ງຍິ່ງຂຶ້ນ. ການເບິ່ງເກມໃນໂທລະທັດດຽວນີ້ເປັນເຫດການທີ່ມີປະສົບການທີ່ອຸດົມສົມບູນຍິ່ງຂຶ້ນເພາະວ່າຂ້າພະເຈົ້າໄດ້ເຄີຍໄປທີ່ນັ້ນແລ້ວ. (ສນາມກິລາເບສບອລ)

ໃນທຳນອງດຽວກັນ, ພຽງແຕ່ອ່ານພຣະຄັມພີ ແນ່ນອນເຮັດໃຫ້ພວກເຮົາຮູ້ກ່ຽວກັບພຣະເຈົ້າແລະພຣະຄຳຂອງພຣະອົງ. ແຕ່ການສຶກສາພຣະຄັມພີນຳໄປສູ່ລະດັບເລິກເຊິ່ງແລະສົມບູນຍິ່ງຂຶ້ນ. ຄຳເວົ້າ, ເຫດການ, ແລະການສັ່ງສອນຂອງພຣະເຢຊູມີຊີວິດຊີວາຂຶ້ນເມື່ອພວກເຮົາລົງທຶນໃຊ້ເວລາເຮັດຫຼາຍກວ່າພຽງແຕ່ອ່ານຂໍ້ຄວາມ. ມັນເປັນຫຼາຍກວ່າການອອກກຳລັງກາຍທີ່ຈະຕື່ມຂໍ້ມູນໃສ່ສມອງຂອງພວກເຮົາດ້ວຍຂໍ້ເທັດຈິງ, ແນວໃດກໍຕາມ, ຊີວິດຂອງພວກເຮົາອຸດົມສົມບູນຂຶ້ນໃນເມື່ອພວກເຮົາດຳເນີນຊີວິດຕາມສິ່ງທີ່ພວກເຮົາສຶກສາ.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

**ການສຶກສາພຣະຄັມພີ**

## 1. 2 ຕີໂມທຽວ 2:14-15

*[14] ຈົ່ງຕັກເຕືອນເຂົາທັງຫລາຍເຖິງຂໍ້ຄວາມເຫລົ່ານີ້ ແລະຈົ່ງສັ່ງເຂົາຕໍ່ພຣະພັກພຣະເຈົ້າ ບໍ່ໃຫ້ເຂົາຜິດຖຽງກັນດ້ວຍຂໍ້ຄວາມຕ່າງໆ ຊຶ່ງ*
*ຫາປໂຍດບໍ່ໄດ້ ແຕ່ກັບເປັນເຫດໃຫ້ຄົນທີ່ຟັງຫລົງຈິບຫາຍໄປ. [15] ຈົ່ງອົດສາພະຍາຍາມສະແດງຕົນເໝືອນເປັນຄົນທີ່ພິສູດແລ້ວຕໍ່ພຣະ-*
*ພັກພຣະເຈົ້າ, ເປັນຄົນງານທີ່ບໍ່ຕ້ອງອາຍແລະໃຊ້ພຣະທັມແຫ່ງຄວາມຈິງຢ່າງຖືກຕ້ອງ.*

ໃນຈົດໝາຍສະບັບພຣະສັນຍາໃໝ່ສ່ວນໃຫຍ່, ບັນດາອັຄສາວົກໄດ້ຂຽນໄປຫາໂບດທ້ອງຖິ່ນ. ຈົດໝາຍສະບັບທີ່ 2 ຂອງອັຄສາວົກໂປໂລສົ່ງເຖິງ ຕີໂມທຽວ ເພື່ອແນະນຳກ່ຽວກັບການຈັດການກັບການສອນປອມ ແລະຄູສອນປອມທີ່ຄຣິສຕະຈັກເມືອງເອເຟໂຊ ຊຶ່ງຕີໂມທຽວກຳລັງເທສນາສັ່ງສອນຢູ່. ຄູສອນປອມໃຊ້ເວລາຂອງເຂົາເຈົ້າຕໍ່ສູ້ກັນກັບຄຳເວົ້າ. ການຄາດເດົາ, ການໂຕ້ຖຽງ, ແລະ ການໂຕ້ວາທີ "**ການທຳລາຍຂອງຜູ້ທີ່ຟັງ**" (ຂໍ້ 14). ໃນທາງກົງກັນຂ້າມ, ຄົນງານທີ່ສັດຊື່, "**ບໍ່ຈຳເປັນຕ້ອງອັບອາຍ**" (ຂໍ້ 15) ເພາະວ່າລາວສອນພຣະຄຳຂອງພຣະເຈົ້າຢ່າງຖືກຕ້ອງ. ລາວບໍ່ມີຄວາມອັບອາຍເພາະວ່າພຣະເຈົ້າພໍພຣະທັຍກັບລາວ. ດັ່ງນັ້ນ, ໂດຍຄວາມພາກພຽນ, ບັນດາຜູ້ເຊື່ອທີ່ສັດຊື່ສາມາດສເນີຕົວເອງຕໍ່ພຣະເຈົ້າໃນຖານະ **ຜູ້ເຮັດວຽກທີ່ໄດ້ຮັບອະນຸມັດແລ້ວ** (approved).

ຄຣິສຕຽນທຸກຄົນສາມາດຮຽນຮູ້ທີ່ຈະສຶກສາພຣະຄຳຂອງພຣະເຈົ້າຢ່າງເລິກເຊິ່ງ. ການສຶກສາພຣະຄຳຂອງພຣະເຈົ້າໝາຍຄວາມວ່າທ່ານຮຽນຮູ້ສະພາບປວັດສາດ, ຫົວຂໍ້ຫຼັກການກ່ຽວກັບສາສນາສາດທີ່ສຳຄັນ, ແລະການສຶກສາຄຳສັບພື້ນຖານ. ເຄື່ອງມືເຫຼົ່ານີ້ຊ່ວຍເຊື່ອມຕໍ່ຄວາມຈິງໃນສມັຍບູຮານກັບຊີວິດສມັຍໃໝ່. ດັ່ງນັ້ນ, ຈະຕ້ອງເຮັດແນວໃດເພື່ອຈະທຳໃນສິ່ງເຫຼົ່ານີ້ຢ່າງດີຂຶ້ນໄປເລື້ອຍໆ?

- **ເວລາ.** ການສຶກສາພຣະຄຳຂອງພຣະເຈົ້າຮຽກຮ້ອງໃຫ້ມີຄຳໝັ້ນສັນຍາທີ່ໃຊ້ເວລາ. ທ່ານອາດເລີ້ມຕົ້ນໂດຍຕັ້ງເວລາໄວ້ສາມສິບນາທີຕໍ່ອາທິດເພື່ອຕັ້ງໃຈສຶກສາແຕ່ລະປື້ມຂອງພຣະຄັມພີ.
- **ຊັບພະຍາກອນ.** ການສຶກສາພຣະຄຳຂອງພຣະເຈົ້າຮຽກຮ້ອງໃຫ້ມີການສຶກສາໜ້ອຍນຶ່ງ. ພວກເຮົາມີຊັບພະຍາກອນຫຼາຍຢ່າງເພື່ອຊ່ວຍສຶກສາພຣະຄັມພີໃຫ້ດີຂຶ້ນ; ຕົວຢ່າງເຊັ່ນ: ສຶກສາພຣະຄັມພີ, ວັດຈະນານຸກົມພຣະຄັມພີ, ຄຳບັນຍາຍ, ແລະຄຳຄິດຄຳເຫັນແມ່ນມີພ້ອມ. ການສຶກ ສາພຣະຄັມພີທີ່ເຊື່ອຖືໄດ້ສາມາດເປັນບາດກ້າວທີ່ດີທຳອິດ.
- **ຊຸມຊົນ.** ເພື່ອນໆຜູ້ຕິດຕາມພຣະຄຣິດເປັນຕົວຊ່ວຍເຫຼືອອັນດີໃນການສຶກສາພຣະຄຳຂອງພຣະເຈົ້າໃຫ້ເລິກເຊິ່ງຍິ່ງຂຶ້ນ. ການສຶກສາພຣະຄຳຂອງພຣະເຈົ້າຮ່ວມກັນໃນກຸ່ມສຶກສາພຣະຄັມພີສາມາດເປັນຕົວຊີ້ນຳທີ່ດີໃນການສຶກສາພຣະຄັມພີດ້ວຍຕົນເອງ. ກຸ່ມຍັງສາມາດຊຸກຍູ້ການສຶກສາສ່ວນຕົວຂອງທ່ານໄດ້ເຊັ່ນດຽວກັນ.
- **ຄວາມຈູງໃຈ.** ເຊັ່ນດຽວກັບສິ່ງສ່ວນໃຫຍ່ໃນຊີວິດ, ທ່ານບໍ່ສາມາດສຶກສາພຣະຄຳຂອງພຣະເຈົ້າຢ່າງຂຍັນຂັນແຂງໂດຍບັງເອີນ. ລະບຽບວິນັຍນີ້ຈະຮຽກຮ້ອງໃຫ້ມີທັງ <u>ຄວາມເຈດຕະນາ</u> ແລະ <u>ຄວາມປາຖນາ</u>. ການສຶກສາພຣະຄຳຂອງພຣະເຈົ້າຮຽກຮ້ອງໃຫ້ມີຄວາມຕັ້ງໃຈແລະຄວາມພາກພຽນ. ເຖິງແມ່ນວ່າມັນຕ້ອງໃຊ້ຄວາມພະຍາຍາມ, ຄວາມພະຍາຍາມຂອງທ່ານຈະໄດ້ຮັບຜົນ(ລາງວັນ)ສເມີໄປ.

## 2. 2 ຕີໂມທຽວ 2:16-19

*[16] ຈົ່ງຫລີກເສັ່ຽງຈາກຖ້ອຍຄຳອັນບໍ່ເປັນປໂຍດແລະນອກສາສນາ ເພາະຄຳຢ່າງນັ້ນຈະນຳຄົນໄປສູ່ຄວາມອະທັມທະວີຫລາຍຂຶ້ນ. [17] ແລະ*
*ຖ້ອຍຄຳຂອງເຂົາ ຈະເໝືອນດັ່ງບາດແຜອັນເປື່ອຍເນົ່າທີ່ກິນລາມໄປ ໃນຈຳພວກນັ້ນມີ ຮີເມນາໂຍ ກັບ ຟີເລໂຕ ເປັນຕົ້ນ. [18] ຄົນທັງ*
*ສອງນັ້ນໄດ້ຫລົງໄປຈາກຄວາມຈິງ ໂດຍກ່າວວ່າ ການຄືນຈາກຄວາມຕາຍນັ້ນໄດ້ຜ່ານພົ້ນໄປແລ້ວ ເຂົາກຳລັງເຮັດໃຫ້ຄວາມເຊື່ອຂອງ*
*ຜູ້ລາງຄົນລົ້ມລະລາຍໄປ. [19] ແຕ່ຮາກຖານອັນແໜ້ນຊຶ່ງພຣະເຈົ້າຊົງວາງໄວ້ນັ້ນ ກໍຕັ້ງໝັ້ນຄົງຢູ່ ໂດຍມີກາປະທັບໄວ້ວ່າ "ອົງພຣະຜູ້-*
*ເປັນເຈົ້າຊົງຮູ້ຈັກຄົນເຫລົ່ານັ້ນທີ່ເປັນຂອງພຣະອົງ" ແລະ "ໃຫ້ທຸກຄົນຊຶ່ງອອກພຣະນາມຂອງອົງພຣະຜູ້ເປັນເຈົ້າ ປິ່ນໜ້າເສັ່ຽງຈາກ*
*ຄວາມຊົ່ວ."*

ສິ່ງນຶ່ງທີ່ບັນດາຄູສອນປອມທີ່ເມືອງເອເຟໂຊ ໄດ້ສອນແມ່ນ<u>ມຸມມອງທີ່ຜິດຂອງການຄືນຈາກຄວາມຕາຍ</u>. ປຣັຊຍາທີ່ເປັນທີ່ນິຍົມແມ່ນ (ລັດທິເທດຜີນ-Gnosticism), ເຊິ່ງລວມເຖິງຄວາມຄິດທີ່ວ່າທາງດ້ານຮ່າງ ກາຍບໍ່ດີ ແຕ່ທາງວິນຍານແມ່ນດີ. ເຫດສະນັ້ນ, ຄູສອນປອມເຫຼົ່ານີ້ໄດ້ປະຕິເສດແນວຄິດຂອງການຄືນຈາກຄວາມຕາຍຝ່າຍເນື້ອໜັງ. ທ່ານໂປໂລໄດ້ເອີ້ນການສອນປະເພດນີ້ວ່າ "<u>ຖ້ອຍຄຳອັນບໍ່ເປັນປໂຍດແລະນອກສາສນາ</u>" (ຂໍ້ 16). ຄຳສອນທີ່ບໍ່ຖືກຕ້ອງດັ່ງກ່າວ, ໂປໂລໄດ້ຢືນຢັນວ່າຄຳສອນເທັດດັ່ງກ່າວ, "<u>ຈະເຮັດໃຫ້ເກີດຄວາມອະທັມທະວີຫຼາຍຂຶ້ນ</u>" ແລະບັນດາຜູ້ທີ່ເຜີຍແຜ່ມັນ "ກໍ<u>ໄດ້ອອກຈາກຄວາມຈິງ</u>." ຄວາມຜິດພາດເຫຼົ່ານີ້ບໍ່ແມ່ນພຽງຄວາມແຕກຕ່າງທາງຄວາມຄິດຊື່ໆ. ໂປໂລຢືນຢັນວ່າ "<u>ການສອນຂອງພວກເຂົາເຈົ້າຈະແຜ່ລາມໄປຄືກັນກັບບາດແຜອັນເປື່ອຍເນົ່າທີ່ກິນລາມໄປ</u>" (ຂໍ້ 17).

ພວກເຮົາດຳເນີນຊີວິດຢູ່ໃນເວລາທີ່ພຣະຄຳຂອງພຣະເຈົ້າມັກຈະຖືກຖິ້ມເຂົ້າໄປໃນການຜະສົມວັດທະນະທັມຂອງອຸດົມການ, ຄວາມເຊື່ອ, ແລະການເຄື່ອນໄຫວ. ດ້ວຍເຫດນີ້ເຮົາຈຶ່ງສຶກສາພຣະຄຳຂອງພຣະເຈົ້າຢ່າງພາກພຽນ. ການສອນທີ່ບໍ່ຖືກຕ້ອງບໍ່ເປັນອັນ

ຕະລາຍ ເພາະມັນຫ່າງໄກຈົນບໍ່ມີໃຜທີ່ຈະສາມາດເຊື່ອມັນໄດ້. ການສອນຜິດແມ່ນອັນຕະລາຍເພາະວ່າມັນສາມາດເປັນໄປໄດ້ຢ່າງງ່າຍດາຍຈະເຊື່ອ. ພວກເຮົາອາດຈະບໍ່ຕົກຫຼຸມຕໍ່ຜູ້ທີ່ສອນພວກເຮົາໃຫ້ຖວາຍລູກກົກໃຫ້ກັບພະເຈົ້າທີ່ສົມມຸດເອົາ, ແຕ່ຄົນສາມາດໄດ້ຮັບການຊັກຊວນໄດ້ຢ່າງງ່າຍດາຍໃຫ້ຫຼົງຜິດຕໍ່ພຣະຄັມພີຍ້ອນວ່າບາງຄົນບອກເຂົາເຈົ້າວ່າຜູ້ແປຄັມພີເຮັດຜິດພາດກົດຫຼັກໃນການແປພຣະຄັມພີ. ຍິ່ງໄປກວ່ານັ້ນ, ໃນເວລາທີ່ຊະນະຄວາມຄິດຂອງສັງຄົມປ່ຽນໄປຢ່າງຫຼວງຫຼາຍ, ຜູ້ຕິດຕາມພຣະຄຣິດອາດຈະຮູ້ສຶກຕໍ່ຄວາມກົດດັນທີ່ຈະງໍກັບຫາທັດສະນະຂອງສຽງສ່ວນຫຼາຍ.

ເມື່ອທ່ານໂປໂລຂຽນວ່າ "*ພຣະຜູ້ເປັນເຈົ້າຊົງຮູ້ຈັກບັນດາຜູ້ທີ່ເປັນຂອງພຣະອົງ, ໃຫ້ທຸກຄົນທີ່ຮຽກຮ້ອງໃນພຣະນາມຂອງພຣະຜູ້ເປັນເຈົ້າຫັນຫນີຈາກຄວາມຊົ່ວຮ້າຍ*" (ຂໍ້ 19), ທ່ານບໍ່ພຽງແຕ່ຊົງເອີ້ນຄູສອນຫຼືສິດຍາພິບານໃຫ້ຫັນໜີຈາກຄວາມຊົ່ວຂອງການສອນຜິດເທົ່ານັ້ນ. ທ່ານໄດ້ບັນຊາໃຫ້ທຸກໆຄົນທີ່ຮ້ອງອອກໃນພຣະນາມຂອງພຣະຜູ້ເປັນເຈົ້າໃຫ້ເຮັດເໝືອນກັນ. ຜູ້ຕິດຕາມພຣະຄຣິດທຸກຄົນຄວນຕັ້ງໃຈຕົນເອງຢ່າງພາກພຽນທີ່ຈະຮູ້ ຈັກພຣະຄຳຂອງພຣະເຈົ້າຢ່າງເລິກເຊິ່ງ ເພື່ອຫຼີກເວັ້ນຈາກການກ້າວໄປສູ່ພື້ນຖານທີ່ສັ່ນສະເທືອນຂອງການສອນທີ່ຜິດ. ພຣະເຈົ້າຊົງມີພຣະປະສົງໃຫ້ລູກໆຂອງພຣະອົງໃຊ້ເວລາສຶກສາພຣະຄຳຂອງພຣະອົງຢ່າງຂຍັນໝັ່ນພຽນ. ພຣະເຈົ້າຕ້ອງການໃຫ້ພວກເຮົາສຶກສາປວັດສາດ, ເນື້ອເຣື່ອງ, ແລະຫົວຂໍ້ເຣື່ອງ. ພຣະອົງຊົງມີພຣະປະສົງໃຫ້ພວກເຮົາຄຸ້ນເຄີຍກັບຄວາມຈິງຫຼາຍຈົນພວກເຮົາສາມາດກວດຫາຂໍ້ອ້າງທີ່ຜິດພາດໄດ້ໃນກະພິບຕາ. ເມື່ອທ່ານສຶກສາພຣະຄຳຂອງພຣະເຈົ້າຢ່າງສັດຊື່, ມັນຈະຊ່ວຍໃຫ້ທ່ານຢືນຢູ່ເທິງຄວາມຈິງບໍ່ວ່າໃຜຈະພະຍາຍາມລໍ້ລວງທ່ານດ້ວຍ "ຖ້ອຍຄຳອັນບໍ່ເປັນປໂຍດແລະນອກສາສນາ."

*ເມື່ອໃດທີ່ທ່ານໄດ້ຮັບຄວາມເຂົ້າໃຈເລິກຊຶ້ງໂດຍການໄດ້ຍິນພຣະຄັມພີທີ່ໄດ້ຖືກອະທິບາຍ?*

## 3. 2 ຕີໂມທຽວ 2:22-26

[22]*ດັ່ງນັ້ນເຈົ້າຈົ່ງຫລີກໜີຈາກຣາຄະຕັນຫາຂອງຄົນໜຸ່ມ ຈົ່ງຕິດຕາມຄວາມຊອບທັມ, ຄວາມເຊື່ອ, ຄວາມຮັກ, ແລະສັນຕິສຸກ ຮ່ວມກັບ*
*ຄົນທັງປວງທີ່ອອກພຣະນາມອົງພຣະຜູ້ເປັນເຈົ້າດ້ວຍໃຈບໍຣິສຸດ.* [23]*ການຖົກຖຽງກັນແບບໂງ່ໆທີ່ບໍ່ເປັນແກ່ນສານນັ້ນ ຈົ່ງຫລີກເສັຽດ້ວຍ*
*ຮູ້ແລ້ວວ່າ ການເຫລົ່ານັ້ນພາໃຫ້ເກີດການວິວາດຜິດຖຽງກັນ.* [24]*ຝ່າຍຜູ້ຮັບໃຊ້ຂອງອົງພຣະຜູ້ເປັນເຈົ້າບໍ່ຕ້ອງວິວາດຜິດຖຽງກັນແຕ່ຕ້ອງ*
*ມີໃຈເມດຕາຕໍ່ຄົນທັງປວງ, ເປັນຄູທີ່ເໝາະສົມແລະມີໃຈພາກພຽນອົດທົນ.* [25]*ຊີ້ແຈງໃຫ້ຄົນທີ່ຂັດຂວາງຕໍ່ສູ້ນັ້ນດ້ວຍໃຈອ່ອນສຸພາບ ວ່າ*
*ພຣະເຈົ້າອາດຊົງໂຜດໃຫ້ເຂົາຖິ້ມໃຈເກົ່າເອົາໃຈໃໝ່ ແລະມາເຖິງການສັງເກດຮູ້ຄວາມຈິງ,* [26]*ແລະໃຫ້ເຂົາຮູ້ສຶກຕື່ນຕົວຈຶ່ງຫລຸດພົ້ນ*
*ຈາກບ້ວງແຮ້ວຂອງມານ ຜູ້ຊຶ່ງຈັບເຂົາໄວ້ໃຫ້ເຮັດຕາມຄວາມປະສົງຂອງມັນ.*

ການຮູ້ປວັດສາດ, ເນື້ອເຣື່ອງ, ແລະຄວາມແຕກຕ່າງຂອງພາສາທັງໝົດຊ່ວຍໃຫ້ພວກເຮົາປ່ຽນຈາກຄວາມເຂົ້າໃຈທົ່ວໄປ ໄປສູ່ຄວາມເຂົ້າໃຈທີ່ເລິກເຊິ່ງຍິ່ງຂຶ້ນໃນພຣະຄຳຂອງພຣະເຈົ້າ. ແຕ່ພວກເຮົາບໍ່ໄດ້ສຶກສາພຣະຄຳຂອງພຣະເຈົ້າເປັນພຽງແຕ່ການຝຶກຝົນສະຕິປັນຍາ. ເຊັ່ນດຽວກັນກັບການອ່ານແລະໄດ້ຍິນພຣະຄຳຂອງພຣະເຈົ້າ, ພວກເຮົາສຶກສາພຣະຄຳຂອງພຣະເຈົ້າເພື່ອດຳເນີນຊີວິດແລະແບ່ງປັນພຣະຄຳນັ້ນກັບຄົນອື່ນໆ.

*ພຣະຄຳຂອງພຣະເຈົ້າມີອິດທິພົນແນວໃດຕໍ່ການສແວງຫາຄວາມນັບຖືພຣະເຈົ້າຂອງທ່ານ?*

ໃນຂໍ້ 22 ຫາ 26, ທ່ານໂປໂລໄດ້ນຳສເນີຄວາມແຕກຕ່າງທີ່ໂດດເດັ່ນລະຫວ່າງຜູ້ທີ່ປະຕິບັດຕາມທາງທີ່ບໍ່ຖືກຕ້ອງຫຼາຍທາງຂອງໂລກແລະຜູ້ທີ່ປະຕິບັດຕາມວິທີທາງທີ່ຖືກຕ້ອງ(ຄວາມຈິງ)ຂອງພຣະຄຣິດ. ຈົ່ງຕິດຕາມເຫດຜົນຂອງໂປໂລທີ່ນີ້. ບັນດາຜູ້ທີ່ປະຕິບັດຕາມວິທີທາງທີ່ບໍ່ຖືກຕ້ອງຂອງໂລກດຳເນີນການຈາກ "ຣາຄະຕັນຫາຂອງຄົນໜຸ່ມ". ບັນດາຜູ້ທີ່ປະຕິບັດຕາມວິທີການຂອງໂລກ "ການຜິດຖຽງກັນ" (ຂໍ້ 23) ໂດຍຜ່ານ "*ການຖົກຖຽງກັນແບບໂງ່ໆທີ່ບໍ່ເປັນແກ່ນສານນັ້ນ*". ຢ່າງໃດກໍຕາມ-ແທນທີ່ຈະຜິດຖຽງກັນ-ຄົນທີ່ເຮັດຕາມແນວທາງຂອງພຣະຄຣິດແມ່ນອ່ອນໂຍນແລະອົດທົນ. ຊາວຄຣິສະຕຽນບໍ່ມີພູມຕ້ານທານຈາກຄວາມຮູ້ສຶກຫຼົງໄຫຼເຫຼົ່ານີ້. ອິດທິພົນທາງດ້ານວັທນະທັມມີຄວາມເຂັ້ມແຂງ. ພວກເຮົາມັກຈະຖືກລໍ້ລວງໃຫ້ມີສ່ວນຮ່ວມກັບໂລກດ້ວຍອຸປະກອນຂອງໂລກ. ໂປໂລບໍ່ໄດ້ສັ່ງ

ໃຫ້ພວກເຮົາຈັບອາວຸດແລະດັກໂຈມຕີພວກທີ່ພວກເຮົາບໍ່ເຫັນດີນຳ. ແທນທີ່ຈະເປັນແນວນັ້ນ, ທ່ານໄດ້ສອນພວກເຮົາໃຫ້ເຊື່ອຟັງພຣະຄຳຂອງພຣະເຈົ້າ, ດຳເນີນຊີວິດຕາມວິຖີທາງຂອງພຣະຄຣິດ ແລະສັ່ງສອນຄູ່ຕໍ່ສູ້(ສັດຕູ)ຂອງພວກເຮົາຢ່າງອ່ອນໂຍນ. **ເປັນຫຍັງ?** ເພາະວ່າໃຜຈະຮູ້? "<u>ບາງທີພຣະເຈົ້າຈະຊົງອະນຸຍາດໃຫ້ພວກເຂົາເຈົ້າກັບໃຈນຳພວກເພິ່ນໄປສູ່ການຮູ້ຈັກກັບຄວາມຈິງ</u>" (ຂໍ້ 25).

ຢ່າພາດ(ສູດ)ທາງຈິດວິນຍານທີ່ເປັນກຸນແຈອັນສຳຄັນນີ້: <u>ການສຶກສາພຣະຄັມພີຂອງທ່ານ ບວກກັບການນຳໃຊ້ທີ່ອ່ອນໂຍນຂອງທ່ານໃນສິ່ງທີ່ທ່ານຮຽນຮູ້ອາດຈະເທົ່າກັບຄວາມລອດຂອງຄູ່ຕໍ່ສູ້(ສັດຕູ)ຂອງທ່ານ</u>. ການສະແດງຊີວິດທີ່ປ່ຽນແປງເປັນວິທີທີ່ດີທີ່ສຸດທີ່ຈະແບ່ງປັນກັບຄົນອື່ນໆໃນສິ່ງທີ່ທ່ານໄດ້ຮຽນຮູ້ຈາກການສຶກສາພຣະຄັມພີ. ແລະພຣະເຈົ້າຊົງສາມາດໃຊ້ຊີວິດທີ່ປ່ຽນແປງຂອງທ່ານເພື່ອປ່ຽນແປງຊີວິດຂອງຄົນອື່ນ. **<u>ດ້ວຍວິທີນີ້</u>, ຄວາມຂຍັນໝັ່ນພຽນໃນການສຶກສາພຣະຄັມພີຂອງທ່ານ ສາມາດເປັນປໂຍດແທ້ໆຕໍ່ຣາຊອານາຈັກຂອງພຣະເຈົ້າ.**

*<u>ກຸ່ມຂອງພວກເຮົາໄດ້ຊ່ວຍກັນແລະກັນໃຫ້ເຊື່ອຟັງພຣະຄຳຂອງພຣະເຈົ້າແລະແບ່ງປັນໃຫ້ຄົນອື່ນແນວໃດ?</u>*

## ນຳໃຊ້ໃນຊີວິດ

ທ່ານຈະໃຊ້ບາດກ້າວແນວໃດເພື່ອສຶກສາພຣະຄຳຂອງພຣະເຈົ້າ? ຈົ່ງເລືອກເອົານຶ່ງໃນການນຳໃຊ້ຕໍ່ລົງໄປນີ້:

- **ພື້ນຖານທີ່ນຶ່ງ.** ປະເມີນທັສນະຄະຕິໂດຍລວມຂອງທ່ານທີ່ມີຕໍ່ຜູ້ທີ່ປະຕິບັດຕາມຄຳບິດເບືອນຕ່າງໆຂອງພຣະຄຳຂອງພຣະເຈົ້າ. ໃຫ້ແນ່ໃຈວ່າທ່ານກຳລັງສະແດງໃຫ້ເຫັນເຖິງຈິດວິນຍານທີ່ອ່ອນໂຍນແທນທີ່ຈະເປັນທັສນະຄະຕິທີ່ຕໍ່ສູ້.
- **ພື້ນຖານທີ່ສອງ.** ຖ້າທ່ານຍັງບໍ່ທັນມີ, ຈົ່ງພິຈາຣະນາຊື້ປື້ມພຣະຄັມພີສຶກສາ (Study Bible). ຈົ່ງປຶກສາກັບສິດຍາພິບານຂອງທ່ານ ຫຼື ຜູ້ນຳອື່ນໆທີ່ທ່ານໄວ້ໃຈໄດ້ສຳລັບການແນະນຳທີ່ດີ.
- **ພື້ນຖານທີ່ສາມ.** ເລີ້ມສຶກສາປື້ມພຣະຄັມພີໃຫ້ເລິກໆຂຶ້ນກວ່າເກົ່າ. ບາງທີທ່ານສາມາດຖາມຜູ້ເຊື່ອຄົນອື່ນໆໃຫ້ສຶກສາຮ່ວມກັບທ່ານເພື່ອເປັນການທົດສອບຄວາມຮັບຜິດຊອບຂອງກັນແລະກັນ.

ຄວາມຈິງຂອງພຣະຄຳຂອງພຣະເຈົ້າແມ່ນເຂົ້າໃຈໄດ້ເຖິງແມ່ນແຕ່ກັບເດັກນ້ອຍ. ໂດຍທົ່ວໄປແລ້ວພວກເຮົາສາມາດເຂົ້າໃຈພຣະຄັມພີໂດຍການອ່ານ. ຢ່າງໃດກໍຕາມ, ພຣະເຈົ້າຊົງມີພຣະປະສົງໃຫ້ພວກເຮົາເປັນຜູ້ໃຫຍ່ແລະມີຄວາມເຂົ້າໃຈຫຼາຍກວ່າຄວາມເຂົ້າໃຈແບບທົ່ວໄປ. **<u>ໃຫ້ພວກເຮົາພາກັນພະຍາຍາມສຶກສາຢ່າງຂຍັນຂັນແຂງເພື່ອຈະຮູ້ຈັກພຣະຄຳຂອງພຣະເຈົ້າໃຫ້ເລິກເຊິ່ງຍິ່ງຂຶ້ນ!</u>**

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ SSK**